# KAISER PERMANENTE
# ບົດສະຫຼຸບນະໂຍບາຍຂອງການຊ່ວຍເຫຼືອທາງດ້ານການເງິນສໍາລັບການປິ່ນປົວພະຍາດ

ໂຄງການ ຊ່ວຍເຫຼືອທາງດ້ານການເງິນສໍາລັບການປິ່ນປົວພະຍາດ (Medical Financial Assistance, MFA) ຂອງ Kaiser Permanente ໃຫ້ການຊ່ວຍເຫຼືອດ້ານການເງິນ ໃຫ້ແກ່ຄົນເຈັບທີ່ມີຄຸນສົມບັດພຽງພໍ ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຈ່າຍຄ່າປິ່ນປົວສຸກເສີນ ຫຼື ມີຄວາມຈໍາເປັນທາງການແພດ ທີ່ພວກເຂົາໄດ້ຮັບໃນສະຖານທີ່ປິ່ນປົວຂອງ Kaiser Permanente ຫຼື ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente. ຄົນເຈັບສາມາດສະໝັກເຂົ້າຮ່ວມໂຄງການ MFA ດ້ວຍຫຼາຍຊ່ອງທາງ ລວມທັງທາງອອນລາຍ, ດ້ວຍຕົນເອງ, ທາງໂທລະສັບ ຫຼື ໂດຍການຕື່ມຂໍ້ມູນ ແລະ ການຍື່ນໃບສະໝັກ. ຄົນເຈັບຕ້ອງບັນລຸໄດ້ຕາມເງື່ອນໄຂໃນການມີສິດໄດ້ຮັບຕ່າງໆຢູ່ຂ້າງລຸ່ມນີ້ ເພື່ອເຮັດໃຫ້ມີຄຸນສົມບັດພຽງພໍ.

**ແມ່ນໃຜທີ່ມີສິດເຂົ້າຮ່ວມໂຄງການ Financial Assistance ແລະ ມີເງື່ອນໄຂທີ່ຕ້ອງການຫຍັງແດ່?**
ໂຄງການດັ່ງກ່າວຊ່ວຍເຫຼືອຄົນເຈັບທີ່ມີລາຍໄດ້ຕໍ່າ, ບໍ່ມີປະກັນໄພ ຫຼື ດ້ອຍໂອກາດ ທີ່ຕ້ອງການຄວາມຊ່ວຍເຫຼືອໃນການຈ່າຍຄ່າດູແລທາງການແພດ ທັງໝົດ ຫຼື ບາງສ່ວນ. ໂດຍທົ່ວໄປແລ້ວ, ຄົນເຈັບມີສິດເຂົ້າຮ່ວມໂຄງການ ຊ່ວຍເຫຼືອທາງການເງິນ ເມື່ອລາຍໄດ້ທັງໝົດຂອງຄົວເຮືອນຂອງພວກເຂົາແມ່ນຢູ່ທີ່ ຫຼື ຕໍ່າກວ່າ 400% ຂອງຄໍາແນະນໍາກ່ຽວກັບຄວາມທຸກຍາກຂອງລັດຖະບານກາງ (Federal Poverty Guidelines, FPG) ຫຼື ມີຄ່າໃຊ້ຈ່າຍດ້ານການປິ່ນປົວທີ່ສູງກວ່າປົກກະຕິ. ຄົນເຈັບຄວນປຶກສາກັບທີ່ປຶກສາດ້ານການເງິນຂອງຄົນເຈັບ ເພື່ອກໍານົດການມີສິດໄດ້ຮັບ ແລະ ການຊ່ວຍເຫຼືອໃນການສະໝັກ.

*ຄົນເຈັບທີ່ມີສິດໄດ້ຮັບການຊ່ວຍເຫຼືອດ້ານການເງິນໃນການປິ່ນປົວ ຈະບໍ່ຖືກຮຽກເກັບຄ່າບໍລິການເກີນຈໍານວນເງິນທີ່ໄດ້ຖືກຮຽກເກັບທົ່ວໄປ (Amounts Generally Billed, AGB) ສໍາລັບການປິ່ນປົວສຸກເສີນ ຫຼື ມີຄວາມຈໍາເປັນທາງການແພດອື່ນໆ. ເຂົ້າເບິ່ງ* kp.org/mfa/ncal *ສໍາລັບຂໍ້ມູນກ່ຽວກັບ AGB.*

**Kaiser Permanente ມີການຄັດເລືອກຄົນເຈັບ ສໍາລັບການມີສິດເຂົ້າຮ່ວມໂຄງການຂອງລັດ ແລະ ເອກະຊົນບໍ່?**
Kaiser Permanente ໃຫ້ການຊ່ວຍເຫຼືອຄົນເຈັບໃນການກໍານົດໂຄງການຄຸ້ມຄອງສຸຂະພາບຂອງລັດ ແລະ ເອກະຊົນທີ່ເປັນໄປໄດ້ ທີ່ອາດຈະຊ່ວຍໃນການເຂົ້າເຖິງຄວາມຕ້ອງການໃນການດູແລສຸຂະພາບ. ຄົນເຈັບທີ່ຖືກພິຈາລະນາວ່າມີເງື່ອນໄຂເຂົ້າຮ່ວມໂຄງການຄຸ້ມຄອງສຸຂະພາບຂອງລັດ ຫຼື ເອກະຊົນໃດໜຶ່ງ ແມ່ນຕ້ອງໄດ້ສະໝັກ ເຂົ້າໃນໂຄງການເຫຼົ່ານັ້ນ.

**ໂຄງການໃຫ້ການຄຸ້ມຄອງຫຍັງແດ່?**
ໂຄງການ Medical Financial Assistance ຄຸ້ມຄອງການປິ່ນປົວທີ່ຈໍາເປັນທາງການແພດທີ່ສະໜອງໃຫ້ຢູ່ທີ່ສໍານັກງານທາງການແພດ, ໂຮງໝໍ, ຮ້ານຂາຍຢາຂອງ Kaiser Permanente ຫຼື ທີ່ສະໜອງໃຫ້ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente. ປະເພດການບໍລິການຕ່າງໆ ທີ່ບໍ່ໄດ້ຮັບການຄຸ້ມຄອງປະກອບມີ ການບໍລິການທີ່ບໍ່ໄດ້ຮັບການພິຈາລະນາວ່າເປັນກໍລະນີສຸກເສີນ ຫຼື ຈໍາເປັນທາງການແພດ ໂດຍຜູ້ໃຫ້ບໍລິການປິ່ນປົວຂອງ Kaiser Permanente, ການບໍລິການຮັກສາການມີບຸດຍາກ ແລະ ການອຸ້ມບຸນ ພ້ອມທັງເບັ້ຍປະກັນການດູແລສຸຂະພາບ. ກະລຸນາເບິ່ງບັນຊີລາຍຊື່ທັງໝົດເພີ່ມຕື່ມໃນນະໂຍບາຍຂອງ MFA.

**ມີການຊ່ວຍເຫຼືອດ້ານພາສາບໍ່?**
ມີນາຍແປພາສາໃຫ້ທ່ານໂດຍບໍ່ເສຍຄ່າ, ໃບຄໍາຮ້ອງຂໍສະໝັກ, ນະໂຍບາຍ ແລະ ບົດສະຫຼຸບນະໂຍບາຍນີ້ຂອງໂຄງການ Medical Financial Assistance ອາດຈະມີເປັນພາສາຂອງທ່ານ. ສໍາລັບຂໍ້ມູນເພີ່ມຕື່ມ, ໂທ 800-464-4000 ຫຼື ເຂົ້າເບິ່ງເວັບໄຊຂອງພວກເຮົາທີ່ kp.org/mfa/ncal.

**¿Se ofrece asistencia con el idioma?**
Hay intérpretes disponibles sin costo para usted. Es posible que la solicitud para recibir asistencia financiera para los gastos médicos, la póliza y este resumen de la póliza estén disponibles en su idioma. Para obtener más información, llame al 800-464-4000 o consulte nuestro sitio web en kp.org/mfa/ncal.

**是否提供語言協助？**
可免費為您提供口譯服務。醫療財務援助申請、政策和本政策摘要均可用您的語言提供。詳情請撥打 800-464-4000 或瀏覽網站 kp.org/mfa/ncal。

**Kaiser Permanente ມີນະໂຍບາຍກ່ຽວກັບການຊ່ວຍເຫຼືອດ້ານການເງິນບໍ່?**
ທ່ານອາດຈະຂໍເອົານະໂຍບາຍຂອງ Medical Financial Assistance ຂອງ Kaiser Permanente ສະບັບສໍາເນົາຂອງທ່ານໂດຍບໍ່ເສຍຄ່າ ໂດຍການໂທຫາ 800-390-3507, ສົ່ງຈົດໝາຍທາງໄປສະນີໄປທີ່ P.O. Box 30006, Walnut Creek, CA 94598, ຫຼື ເຂົ້າເບິ່ງເວບໄຊຂອງພວກເຮົາໄດ້ທີ່ kp.org/mfa/ncal.

**ຕ້ອງການຄວາມຊ່ວຍເຫຼືອບໍ່?**
ສໍາລັບການຊ່ວຍເຫຼືອ ຫຼື ສອບຖາມກ່ຽວກັບຂັ້ນຕອນການສະໝັກ Medical Financial Assistance, ກະລຸນາໂທ 800-390-3507 ຫຼື ປຶກສາກັບທີ່ປຶກສາດ້ານການເງິນຂອງຄົນເຈັບໃນ ບັນດາທີ່ປຶກສາດ້ານການເງິນຂອງຄົນເຈັບທີ່ໂຮງໝໍໃດໜຶ່ງຂອງ Kaiser Permanente.

**ຂ້າພະເຈົ້າຈະສະໝັກໄດ້ແນວໃດ?**
ທ່ານສາມາດສະໝັກ Medical Financial Assistance ໄດ້ໃນຫຼາຍຊ່ອງທາງ ບໍ່ວ່າໂດຍການຮ້ອງຂໍເອົາຂໍ້ມູນກ່ຽວກັບໂຄງການທາງອອນລາຍ, ດ້ວຍຕົນເອງ ຫຼື ໂທລະສັບ ຫຼື ຮ້ອງຂໍເອົາເອກະສານຈາກ ແຫຼ່ງຕ່າງໆ ໃດໜຶ່ງຕໍ່ໄປນີ້:

- ທາງອອນລາຍ ທີ່ kp.org/mfa/ncal
- ທີ່ປຶກສາດ້ານການເງິນຂອງຄົນເຈັບໃນ ບັນດາທີ່ປຶກສາດ້ານການເງິນຂອງຄົນເຈັບທີ່ໂຮງໝໍໃດໜຶ່ງຂອງ Kaiser Permanente
- ໂທຫາ 800-390-3507
- ທາງໄປສະນີ (ໂດຍບໍ່ເສຍຄ່າ) ທີ່ P.O. Box 30006, Walnut Creek, CA 94598
- ດາວໂຫຼດໃບຄໍາຮ້ອງຂໍສະໝັກຜ່ານເວັບໄຊຊຸມຊົນຂອງ Kaiser Permanente ທີ່ kp.org/mfa/ncal.

ກະລຸນາສົ່ງໃບສະໝັກທີ່ຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວ (ລວມທັງເອກະສານ ແລະ ຂໍ້ມູນທີ່ຕ້ອງການທັງ ໝົດ ທີ່ລະບຸໄວ້ໃນຄໍາແນະນໍາໃນການສະໝັກ) ກັບຄືນໃຫ້ພະແນກຮັບຄົນເຈັບເຂົ້າໂຮງໝໍ ຫຼື ພະແນກສຸກເສີນຂອງ Kaiser Permanente ທີ່ຢູ່ໃກ້ທີ່ສຸດ ຫຼື ສົ່ງຄໍາຮ້ອງຂໍສະໝັກທາງໄປສະນີໄປທີ່: MFA Program, P.O. Box 30006, Walnut Creek, CA 94598.

Kaiser Permanente ຈະກວດກາບັນດາຄໍາຮ້ອງຂໍສະໝັກທີ່ສົ່ງມາເມື່ອຕື່ມຂໍ້ມູນໃສ່ຄົບຖ້ວນແລ້ວ ແລະ ຈະຕັດສິນວ່າທ່ານມີສິດໄດ້ຮັບຕາມນະໂຍບາຍຂອງ Medical Financial Assistance ຂອງ Kaiser Permanente ຫຼືບໍ່. ຄໍາຮ້ອງຂໍສະໝັກທີ່ບໍ່ຄົບຖ້ວນອາດຈະເຮັດໃຫ້ການດໍາເນີນການ ຫຼື ການປະຕິເສດຄໍາຮ້ອງຂໍສະໝັກ MFA ຂອງທ່ານມີຄວາມຊັກຊ້າ, ແຕ່ Kaiser Permanente ຈະແຈ້ງໃຫ້ບັນດາຜູ້ສະໝັກຊາບ ແລະ ໃຫ້ໂອກາດໃນການສົ່ງເອກະສານ ຫຼື ຂໍ້ມູນທີ່ຂາດຫາຍໄປ ພາຍໃນກໍານົດເວລາທີ່ກໍານົດໄວ້.

©2022 Kaiser Foundation Hospital;
Kaiser Foundation Health Plan, Inc.